ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ເງື່ອນໄຂການຮັກສາຄວາມໝັ້ນຄົງຂອງທະນາຄານທຸລະກິດ

ຄວາມໝັ້ນຄົງຂອງທະນາຄານທຸລະກິດ ໝາຍເຖິງທະນາຄານທຸລະກິດ ທີ່ມີການບໍລິຫານທີ່ດີ, ມີຜົນກຳໄລ, ມີສະພາບຄ່ອງ, ມີທຶນພຽງພໍໃນການດຳເນີນທຸລະກິດ ໂດຍສະເພາະການສະໜອງສິນເຊື່ອໃຫ້ແກ່ລູກຄ້າ, ການຂະຫຍາຍກິດຈະການ ຄືການນຳໃຊ້ຜະລິດຕະພັນໃໝ່ ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງສັງຄົມ. ສະນັ້ນ, ເມື່ອເຫັນໄດ້ເນື້ອໃນຄວາມໝາຍດັ່ງກ່າວແລ້ວ ກົດໝາຍຈຶ່ງໄດ້ກຳນົດຕໍ່ກັບດ້ານເງື່ອນໄຂການຮັກສາຄວາມໝັ້ນຄົງ ຂອງທະນາຄານທຸລະກິດເພື່ອຈັດຕັ້ງປະຕິບັດ ຊຶ່ງໃນມາດຕາ 46 : ເງື່ອນໄຂລວມກ່ຽວກັບການຮັກສາຄວາມໝັ້ນຄົງຂອງທະນາຄານທຸລະກິດ ຕາມກົດໝາຍວ່າດ້ວຍ ທະນາຄານທຸລະກິດ, ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018 (ສະບັບປັບປຸງ) ໄດ້ກຳນົດວ່າ: ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດຕ້ອງປະຕິບັດເງື່ອນໄຂລວມ ກ່ຽວກັບການຮັກສາຄວາມໝັ້ນຄົງ ຄື:

1. ດຳເນີນທຸລະກິດ ຕາມລະບົບການບໍລິຫານ ແລະ ການບັນຊີທີ່ດີຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດ. ໝາຍຄວາມວ່າ: ທະນາຄານທຸລະກິດ ຕ້ອງມີລະບົບການບໍລິຫານທີ່ດີ ແລະ ຮັດກຸມເປັນຕົ້ນແມ່ນຕ້ອງມີລະບົບ ແລະ ກຳນົດລະບຽບການຄຸ້ມຄອງບໍລິຫານພາຍໃນ ຊຶ່ງເນື້ອໃນຕົ້ນຕໍກຳນົດກ່ຽວກັບໂຄງປະກອບການຈັດຕັ້ງ ແລະ ກົນໄກການຄຸ້ມຄອງບໍລິຫານ ໂດຍລວມເອົາທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບ, ການຕິດຕາມ,ກວດກາ ແລະ ການລາຍງານຂອງຜູ້ບໍລິຫານ, ໜ່ວຍງານ ແລະ ພະນັກງານຂອງທະນາຄານທຸລະກິດ ແລະ ປະຕິບັດການບັນຊີຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ຮັກສາທຶນໃຫ້ພຽງພໍ, ຮັບປະກັນສະພາບຄ່ອງ ແລະ ຮັບປະກັນການບໍລິຫານຊັບສິນ ໃຫ້ມີຄວາມຕໍ່ເນື່ອງ ແລະ ມີການກະຈາຍຄວາມສ່ຽງ. ໝາຍຄວາມວ່າ: ທະນາຄານທຸລະກິດ ຕ້ອງຮັກສາອັດຕາສ່ວນຄວາມພຽງພໍຂອງທຶນທັງໝົດ ບໍ່ໃຫ້ຕ່ຳກວ່າ 8% ຂອງຊັບສິນທີ່ມີນ້ຳໜັກຄວາມສ່ຽງ; ຮັບປະກັນໃຫ້ການດຳເນີນທຸລະກິດໃຫ້ມີສະພາບຄ່ອງ ແລະ ການບໍລິຫານຊັບສິນໃຫ້ມີຄວາມຕໍ່ເນື່ອງ ໂດຍຕ້ອງມີລະບຽບ, ກົນໄກ ແລະ ຂັ້ນຕອນທີ່ເໝາະສົມ ໃນການບໍລິຫານຊັບສິນ, ຕ້ອງຫັກເງິນແຮໄວ້ຢ່າງພຽງພໍ ແລະ ມີການກະຈາຍຄວາມສ່ຽງ ດ້ວຍວິທີກະຈາຍການລົງທຶນຢ່າງມີແບບແຜນ ແລະ ມີການແບ່ງສັດສ່ວນການລົງທຶນໃນແຕ່ລະປະເພດຢ່າງເໝາະສົມ;
3. ມີລະບຽບ, ກົນໄກ ແລະ ຂັ້ນຕອນທີ່ຄົບຖ້ວນ ເພື່ອບໍລິຫານຄວາມສ່ຽງດ້ານຕ່າງໆ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດລະບຽບການລະອຽດ ກ່ຽວກັບການຮັກສາຄວາມໝັ້ນຄົງ ຂອງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ. ນອກຈາກເງື່ອນໄຂ ກ່ຽວກັບການຮັກສາຄວາມໝັ້ນຄົງທີ່ໄດ້ກ່າວມານັ້ນແລ້ວ, ທະນາຄານທຸລະກິດຍັງສາມາດໝູນໃຊ້ວິທີປະຕິບັດທີ່ດີ ກ່ຽວກັບການຮັກສາຄວາມໝັ້ນຄົງ ຕາມການເຫັນດີຂອງທະນາຄານແຫ່ງ ສປປ ລາວ.

ນັ້ນແມ່ນເງື່ອນໄຂການຮັກສາຄວາມໝັ້ນຄົງ ຂອງທະນາຄານທຸລະກິດ ຕາມກົດໝາຍວ່າດ້ວຍ ທະນາຄານທຸລະກິດ (ສະບັບປັບປຸງ) ໄດ້ກຳນົດແຈ້ງໃນເງື່ອນໄຂດັ່ງກ່າວນັ້ນ ມີຄວາມສຳຄັນທີ່ສຸດ ໃນການຈັດຕັ້ງປະຕິບັດເພື່ອຮັບປະກັນດ້ານຄວາມໝັ້ນຄົງຂອງທະນາຄານທຸລະກິດ ໂດຍສະເພາະດ້ານທຶນຂອງທະນາຄານທຸລະກິດ ຕ້ອງມີຄວາມພຽງພໍ ແລະ ບໍ່ໃຫ້ຫຼຸດຕາມອັດຕາສ່ວນຕາມລະບຽບການທີ່ໄດ້ກຳນົດ ແລະ ສາມາດໝູນໃຊ້ວິທີປະຕິບັດອື່ນທີ່ດີ ກ່ຽວກັບການຮັກສາຄວາມໝັ້ນຄົງຂອງທະນາຄານທຸກລະກິດຢ່າງເໝາະສົມ.

**#ຮຽບຮຽງໂດຍ: ວັນນະສິດ ສິດທິລາດວົງສາ, ກົມນິຕິກຳ ທະນາຄານແຫ່ງ ສປປ ລາວ.**

**ຄົນລາວ ຮັກເມືອງລາວ ໃຊ້ເງິນກີບລາວ**